

# ມິດຕະພາບແຫ່ງການປະຕິວັດອັນຍາວນານ ເປັນເວລາເຄິ່ງສະຕະວັດ

## ---ໃນໂອກາດການຕັ້ງສາຍພົວພັນການທູດ ລາວ-ຈີນ ຄົບຮອບ 65 ປີ

ເນື່ອງໃນໂອກາດການສ້າງຕັ້ງສາຍພົວພັນການທູດ ລາວ-ຈີນ ຄົບຮອບ 65 ປີ, ຜູ້ທີ່ເຄີຍສຳຜັດກັບມິດຕະພາບລະຫວ່າງສອງປະເທດໄດ້ລຳລຶກຄືນໄລຍະເວລາໃນຊຸມປີ 1960 ຫາ 1970 ທີ່ສະຫງ່າລາສີ. ຄວາມຊົງຈຳຮ່ວມກັນທີ່ຂ້າມຜ່ານການເວລາ ແລະ ສະຖານທີ່ຕ່າງໆໄດ້ເປັນພະຍານຢ່າງຈະແຈ້ງເຖິງມິດຕະພາບອັນເລິກເຊິ່ງຂອງ"ສະຫາຍ ແລະ ອ້າຍນ້ອງ" ລະຫວ່າງລາວ ແລະ ຈີນ.

## ໝູ່ເພື່ອນທີ່ຍາກຈະລືມໄດ້

ເລົ່າເລື່ອງໂດຍ: ທ່ານ ສົມມາດ ພົລເສນາ, ອະດີດຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ

ຄອບຄົວຂອງຂ້າພະເຈົ້າມີໄມຕີຈິດມິດຕະພາບອັນເລິກເຊິ່ງກັບຈີນ.

ສະຫາຍ ກິນິມ ພົລເສນາ, ພໍ່ຂອງຂ້າພະເຈົ້າ ໄດ້ປະກອບສ່ວນອັນສຳຄັນ ຕໍ່ການສ້າງມິດຕະພາບລະຫວ່າງສອງຊາດລາວ ແລະ ຈີນ.

ໃນປີ 1961, ດ້ວຍຄວາມພະຍາຍາມ ແລະ ການຊຸກຍູ້ຮ່ວມກັນ ຂອງສະຫາຍ ພ້ອມດ້ວຍຜູ້ນຳຈີນ, ລາວ ແລະ ຈີນ ໄດ້ສ້າງຕັ້ງສາຍພົວພັນການທູດຂຶ້ນ ຢ່າງເປັນທາງການ.

ຂ້າພະເຈົ້າໄດ້ສຶກສາຢູ່ປະເທດຈີນເປັນເວລາດົນນານ,ເຊິ່ງເປັນຊ່ວງເວລາທີ່ໜ້າຈົດຈຳທີ່ສຸດ. ໃນລະຫວ່າງການຮຽນຢູ່ປະເທດຈີນ, ຂ້າພະເຈົ້າກໍໄດ້ມີໝູ່ເພື່ອນຫຼາຍຄົນ.

ສະຫາຍ ສີ ຈິ້ນຜິງ, ປະທານປະເທດແຫ່ງ ສປ ຈີນ ເປັນໝູ່ຮຽນເກົ່າຂອງໂຮງຮຽນ 81 ເຊັ່ນດຽວກັບຂ້າພະເຈົ້າ ແລະ ອ້າຍຂອງຂ້າພະເຈົ້າ ກໍຮຽນຢູ່ລຸ້ນດຽວກັນກັບເພິ່ນ.

ຫຼາຍປີຜ່ານໄປ, ສະຫາຍ ສີ ຈິ້ນຜິງ ປະທານປະເທດແຫ່ງ ສປ ຈີນ ກໍຍັງຈື່ພວກເຮົາໄດ້ຢູ່.

ຕໍ່ມາ, ພວກເຮົາມີໂອກາດໄດ້ພົບກັບເພິ່ນອີກຄັ້ງໃໝ່, ເຊິ່ງບໍ່ພຽງແຕ່ເປັນກຽດສຳລັບຂ້າພະເຈົ້າເທົ່ານັ້ນ, ແຕ່ຍັງເປັນພອນອັນປະເສີດສຳລັບຄອບຄົວຂອງພວກເຮົາອີກດ້ວຍ.

ມີສຸພາສິດຈີນກ່າວໄວ້ວ່າ "ຍາດພີ່ນ້ອງທີ່ຢູ່ຫ່າງໄກ ກໍບໍ່ເທົ່າ ບ້ານໃກ້ເຮືອນຄຽງທີ່ໃກ້ຊິດກັນ." ສາຍພົວພັນລະຫວ່າງລາວ ແລະ ຈີນ ບໍ່ພຽງແຕ່ເປັນບ້ານໃກ້ເຮືອນຄຽງທີ່ດີ, ໝູ່ເພື່ອນທີ່ດີ, ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ ເທົ່ານັ້ນ, ແຕ່ຍັງເປັນຄູ່ຮ່ວມຊາຕາກຳ ແລະ ຄູ່ຮ່ວມມືທີ່ມີອຸດົມການຮ່ວມກັນ.



ພວກເຮົາຄວນເຮັດແນວໃດ ເພື່ອເພີ່ມພູນມິດຕະພາບລະຫວ່າງ ລາວ ແລະ ຈີນ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ? ປັດໄຈສຳຄັນ ແມ່ນເພີ່ມທະວີການແລກປ່ຽນ ແລະ ການຮ່ວມມື ທາງດ້ານເສດຖະກິດ, ການຄ້າ ແລະ ວັດທະນະທຳ.

ສະຫາຍ ຈູມມະລີ ໄຊຍະສອນ ປະທານປະເທດ ແຫ່ງ ສປປ ລາວ ໃນເວລານັ້ນ ເຄີຍຄາດຄະເນໄວ້ວ່າ: "ເສັ້ນທາງລົດໄຟ ລາວ-ຈີນ ຈະຊ່ວຍໃຫ້ລາວສາມາດບັນລຸການພັດທະນາແບບກ້າວກະໂດດ." ໃນວັນທີ 3 ທັນວາ 2021, ເມື່ອທາງລົດໄຟໄດ້ເປີດນຳໃຊ້ຢ່າງເປັນທາງການ, ສະຫາຍ ສີ ຈິ້ນຜິງ ປະທານປະເທດ ແຫ່ງ ສປ ຈີນ ໄດ້ກ່າວວ່າ: "ເມື່ອທາງລົດໄຟໄດ້ເປີດນຳໃຊ້ແລ້ວ, ເສັ້ນທາງລະຫວ່າງນະຄອນຄຸນໝິງ ແລະ ນະຄອນຫຼວງວຽງຈັນ, ພູຜາກໍຈະບໍ່ສູງອີກຕໍ່ໄປ ແລະ ໄລຍະທາງຈະບໍ່ຍາວອີກຕໍ່ໄປ."

ຂ້າພະເຈົ້າໄດ້ດຳລົງຕຳແໜ່ງ ເປັນລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ຂ້າພະເຈົ້າຮູ້ສຶກພາກພູມໃຈຫຼາຍທີ່ຂ້າພະເຈົ້າ ແລະ ເພື່ອນຮ່ວມງານຫຼາຍຄົນ ໄດ້ປະກອບສ່ວນເຂົ້າໃນການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ. ພວກເຮົາໄດ້ອຸທິດເຫື່ອແຮງຢ່າງຕັ້ງໜ້າ ນັບຕັ້ງແຕ່ການສຳຫຼວດ, ການວາງແຜນ-ອອກແບບ, ຈົນເຖິງການກໍ່ສ້າງໃຫ້ສຳເລັດ.

ທາງລົດໄຟສາຍນີ້ ຕອບສະໜອງຄວາມຕ້ອງການດ້ານການຂົນສົ່ງທັງຜູ້ໂດຍສານ ແລະ ສິນຄ້າ, ສອດຄ່ອງກັບຄວາມຕ້ອງການ ດ້ານການພັດທະນາຕົວຈິງຂອງ ສປປ ລາວ. ຕາມຄວາມຮັບຮູ້ຂອງຂ້າພະເຈົ້າ, ປັດຈຸບັນນີ້ປະລິມານສິນຄ້າທັງໝົດທີ່ໄດ້ຂົນສົ່ງໂດຍທາງລົດໄຟຫຼາຍກວ່າ 80 ລ້ານໂຕນ.

ປັດຈຸບັນ, ນັກທ່ອງທ່ຽວຕ່າງປະເທດ ຈົນໄປຮອດປະມຸກລັດຕ່າງໆ ພວມພາກັນຂີ່ລົດໄຟລາວ-ຈີນ, ເສັ້ນທາງລົດໄຟໄດ້ກາຍເປັນສະຖານທີ່ຕ້ອງເຊັກອິນ ເມື່ອມາທ່ຽວລາວ. ພວກເຮົາຄວນຮ່ວມມືກັນນຳໃຊ້ທາງລົດໄຟສາຍນີ້ ໃຫ້ເກີດປະໂຫຍດ ແລະ ເຮັດໃຫ້ມີບົດບາດທີ່ຍິ່ງໃຫຍ່ກວ່າເກົ່າ.

ຂ້າພະເຈົ້າໄດ້ປະຕິບັດໜ້າທີ ຕາມການຊີ້ນຳຂອງ ສູນກາງພັກ ແລະ ການນຳສູງສຸດຂອງລາວສະເໝີມາ ແລະ ສືບຕໍ່ປະຕິບັດໜ້າທີ່ຂອງຂ້າພະເຈົ້າ ເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນສາຍພົວພັນມິດຕະພາບ ລະຫວ່າງ ສອງຊາດ ລາວ-ຈີນ.

ມິດຕະພາບ ລະຫວ່າງ ລາວ-ຈີນ ຕ້ອງໃຫ້ຊາວໜຸ່ມຮັບເອົາບົດບາດອັນສຳຄັນນີ້. ພວກເຮົາຍັງຈະອຸທິດຕົນເພື່ອບຳລຸງສ້າງຄົນຮຸ່ນໃໝ່ ໃຫ້ເປັນຜູ້ສືບທອດມິດຕະພາບ ລາວ-ຈີນ, ເພື່ອໃຫ້ມິດຕະພາບນີ້ ສາມາດສືບທອດຈາກຮຸ່ນສູ່ຮຸ່ນແລະບໍ່ຂາດຫາຍໄປ.

ໂດຍ: ທັນເສິງຢວນ, ວິມົນ, ຮວງຢີ້ຊຽນ



## ທວນຄືນວັນເວລາທີ່ສະຫງ່າງາມ ຢູ່ "ຖ້ຳຈີນ"

ເລົ່າເລື່ອງໂດຍ: ທ່ານ ຫຼີເຈົ້າຊຸ້ນ (Li Zhaoshun), ນັກຮົບເກົ່າທີ່ຊ່ວຍເຫຼືອລາວຕໍ່ຕ້ານຈັກກະພັດອາເມຣິກາ

ຂ້າພະເຈົ້າຊື່ຫຼີເຈົ້າຊຸ້ນ,ເກີດປີ 1938 ທີ່ເມືອງຢາວອານ, ກິ່ງແຂວງຊູຊົງ, ແຂວງຢຸນນານ.

ໃນທ້າຍປີ 1955, ຂ້າພະເຈົ້າອາຍຸ 17 ປີ ໄດ້ຖືກຄັດເລືອກເຂົ້າເປັນທະຫານ.

ໃນປີ 1964, ຂ້າພະເຈົ້າໄດ້ຖືກຍົກຍ້າຍໄປສູນເຮັດວຽກຂອງຄະນະກຳມະການສູນກາງພັກກອມມູນິດຈີນ ປະຈຳສູນກາງພັກປະຊາຊົນລາວ, ເຊິ່ງກໍຄື "ສູນເຮັດວຽກປະຈຳຊຳເໜືອ", ແລະ ໄດ້ເລີ່ມຕົ້ນເຮັດວຽກແປພາສາຢ່າງເປັນທາງການ. ເຮືອນຂອງເຈົ້າ ສຸພານຸວົງ ແມ່ນຕັ້ງຢູ່ເທິງໜ້າຜາແຄມທາງ. ມັນເປັນທີ່ຢູ່ອາໄສແບບໃດ? ນ້ຳຍ້ອຍລົງມາຈາກດ້ານເທິງ, ປາກຖ້ຳສູງຫຼາຍ, ມີຂັ້ນໄດທີ່ສ້າງຂຶ້ນມາເອງ. ເຮືອນສູງສອງຊັ້ນ ບໍ່ສາມາດເຫັນໄດ້ເລີຍວ່າມີຄົນຢູ່ອາໄສຈາກທາງອາກາດ. ເຮືອບິນສັດຕູກໍບໍ່ສາມາດເຫັນໄດ້ວ່າມີຄົນຢູ່ອາໄສ, ສະນັ້ນຈຶ່ງບໍ່ເຄີຍຖືກຖິ້ມລະເບີດໃສ່. ຂ້າພະເຈົ້າອາໄສຢູ່ "ຂ້າງ" ເຮືອນຂອງເຈົ້າສຸພານຸວົງ – ຢູ່ໃນພື້ນທີ່ໜ້າຜາດຽວກັນ. ໃນເວລານັ້ນ, ຂ້າພະເຈົ້າແມ່ນໜຶ່ງໃນຄົນຈີນທີ່ໃກ້ຊິດທີ່ສຸດກັບຜູ້ນຳສູງສຸດຂອງລາວ.

ສຳນັກງານ ແລະ ຄະນະນຳຂອງໜ່ວຍງານຂອງພວກເຮົາ ລ້ວນແຕ່ອາໄສຢູ່ກາງໜ້າຜາ ຫຼື ໃກ້ກັບຖ້ຳ, ເມື່ອມີເຮືອບິນສັດຕູມາ ກໍຈະເຂົ້າໄປລີ້ຢູ່ໃນຖ້ຳຫີນ. ຢູ່ບໍລິເວນແຄມແມ່ນ້ຳໃຕ້ດິນທີ່ກວ້າງຂວາງ ແລະ ຮາບພຽງ, ມີໂຮງງານຜະລິດຢາແຫ່ງໜຶ່ງ. ໂຮງງານຜະລິດຢາມີຄວາມຍາວປະມານໜຶ່ງຮ້ອຍກວ່າແມັດຕາມທິດທາງການໄຫຼຂອງນ້ຳ, ເຊິ່ງເຮືອບິນສັດຕູບໍ່ສາມາດຄົ້ນພົບໄດ້ ແລະ ຄົນທົ່ວໄປກໍຄິດບໍ່ເຖິງວ່າຈະມີໂຮງງານຜະລິດຢາຢູ່ໃນແມ່ນ້ຳໃຕ້ດິນ.

ຂ້າພະເຈົ້າຍັງຈື່ໄດ້ວ່າຄັ້ງໜຶ່ງໄດ້ເດີນທາງໄປແນວໜ້າເພື່ອຖ່າຍພາບການສູ້ຮົບ. ໃນເວລານັ້ນ, ອີງຕາມການຕັດສິນໃຈຂອງຝ່າຍລາວ, ພວກເຂົາໄດ້ຈັດຕັ້ງການກວາດລ້າງພວກໂຈນທີ່ບຸກລຸກເຂົ້າໄປໃນພູໃຫຍ່ແຫ່ງໜຶ່ງ ພາກເໜືອຂອງຊຳເໜືອ ແລະໄດ້ຮຽກຮ້ອງໃຫ້ທີມງານຖ່າຍພາບໄປແນວໜ້າເພື່ອຖ່າຍພາບການສູ້ຮົບກ່ຽວກັບການກວາດລ້າງສັດຕູ. ຄັ້ງທຳອິດ, ພວກເຮົາໄດ້ພັກເຊົາຢູ່ໃນປ່າທີ່ຕີນພູ ແລະໃນມື້ຕໍ່ມາໄດ້ຍ່າງຜ່ານທົ່ງນາທີ່ປົກຄຸມດ້ວຍໝອກ ເນື່ອງຈາກພວກໂຈນໄດ້ວາງລະເບີດຝັງດິນຢູ່ທົ່ວທຸກແຫ່ງ, ຜູ້ປະສານງານຂອງຝ່າຍລາວໄດ້ເຕືອນຊ້ຳແລ້ວຊ້ຳອີກວ່າ: "ໃຫ້ຍ່າງຕາມຮອຍຕີນຂອງຜູ້ນຳທາງ, ຢ່າໄປແຄມທາງ ແລະ ຢ່າເອົາໄມ້ຄ້ອນຕີໄປສຽບໃສ່ແຄມທາງ, ຖ້າບໍ່ດັ່ງນັ້ນ ຈະຖືກລະເບີດຝັງດິນ."

ແຕ່ມີສຽງແຮງໜຶ່ງດັງສະໜັ່ນຂຶ້ນ, ມັນກໍຍັງລະເບີດຂຶ້ນ ທະຫານຍາມທີ່ນຳທາງໄດ້ຢຽບລະເບີດຝັງດິນ. ແພດໝໍໄດ້ຮີບຮ້ອນກົດໜ້າເອິກ ແລະ ຜາຍປອດ, ແຕ່ຊາຍໜຸ່ມຄົນນັ້ນກໍບໍ່ໄດ້ຟື້ນຄືນອີກເລີຍ. ເພື່ອສະໜັບສະໜູນພາລະກິດປົດປ່ອຍປະຊາຊົນລາວ, ລາວໄດ້ເສຍສະຫຼະຊີວິດອັນໜຸ່ມນ້ອຍຂອງຕົນ.

ພວກເຮົາໄດ້ສະແດງຄວາມເຄົາລົບໄວ້ອາໄລອຳລາ ແລະ ສືບຕໍ່ເດີນໜ້າ. ໜຶ່ງເດືອນຕໍ່ມາ, ພວກເຮົາໄດ້ຂຶ້ນພູອີກຄັ້ງໜຶ່ງ, ການສູ້ຮົບໄດ້ສິ້ນສຸດລົງແລ້ວ, ຢູ່ເທິງພື້ນດິນມີໜັງສືພິມ, ກ້ອງຢາສູບ, ໝວກ, ສິ້ນ, ຜ້າເຊັດໜ້າ ແລະ ຊາກສົບຂອງສັດຕູ, ເຊິ່ງມີທາກໄຕ່ໄປມາ ແລະ ມີແມງວັນບິນໄປມາຢູ່ເທິງນັ້ນ.

ໃນປີ 2012, ທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີລາວໃນເວລານັ້ນ ໄດ້ລົງນາມໃນຄຳສັ່ງເລກທີ 135 ເພື່ອມອບຫຼຽນກາມິດຕະພາບຂອງ ສປປ ລາວ ໃຫ້ແກ່ຂ້າພະເຈົ້າ. ໃນປີ 2021, ຫຼຽນກາດັ່ງກ່າວໄດ້ຖືກມອບໃຫ້ຂ້າພະເຈົ້າ. ຈາກການເຂົ້າຮ່ວມກອງກຳລັງຊຳເໜືອໃນປີ 1964 ຈົນເຖິງການກັບຄືນປະເທດພ້ອມກັບກອງກຳລັງໃນປີ 1979, ຂ້າພະເຈົ້າໄດ້ໃຊ້ເວລາຢູ່ລາວເປັນເວລາ 15 ປີເຕັມ. ຂ້າພະເຈົ້າໄດ້ເຮັດວຽກທຸກຢ່າງ, ບໍ່ວ່າຈະເປັນການແປພາສາ, ການປະສານງານທາງທະຫານ, ການພົວພັນຕ່າງປະເທດ, ການໂຄສະນາເຜີຍແຜ່ນະໂຍບາຍ, ແລະ ການເຮັດວຽກກັບປະຊາຊົນ.

ຫຼັງຈາກກັບຄືນປະເທດ, ຂ້າພະເຈົ້າໄດ້ເຮັດວຽກຢູ່ກອງບັນຊາການທະຫານເມືອງຊືເໝົາ ແລະ ກອງບັນຊາການທະຫານ, ແຕ່ໃນໄລຍະເວລາທີ່ຂ້າພະເຈົ້າຢູ່ລາວນັ້ນ, ແມ່ນເປັນໄລຍະເວລາທີ່ຂ້າພະເຈົ້າຈະບໍ່ມີວັນລືມໄດ້ຕະຫຼອດຊີວິດ.

ໂດຍ: ບົວໃສ

(ສະໜອງຂໍ້ມູນໂດຍ: ວາລະສານ "ຈຳປາ" ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)

www.yunnangateway.com